ສະບັບປັບປຸງ ວັນທີ 05 ມິຖຸນາ 2019
ເວລາ 6:55ໂມງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດປະກອບຄຳເຫັນ
## ຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ກັບບົດລາຍງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ 4 ເດືອນ ຄາດຄະເນ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2019 ໃນກອງປະຊຸມສະໄໝສາມັນເທື່ອທີ7 ສະພາແຫ່ງຊາດຊຸດທີ VIII

**ສະເໜີໂດຍ: ທ່ານ ປອ. ບຸນປອນ ບຸດຕະນະວົງ ຮອງປະທານຄະນະປະຈຳສະພາແຫ່ງຊາດ**

**ຮຽນ: ເລຂາທິການໃຫຍ່ ປະທານປະເທດແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;**
- **ທ່ານ ປະທານສະພາແຫ່ງຊາດ, ປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;**
- **ທ່ານ ນາຍົກລັດຖະມົນຕີ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;**
- **ບັນດາທ່ານ ຜູ້ນຳພັກ-ລັດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;**
- **ບັນດາທ່ານ ຄະນະປະທານ, ສະມາຊິກສະພາແຫ່ງຊາດ;**
- **ບັນດາທ່ານ ສະມາຊິກລັດຖະບານ, ແຂກຜູ້ມີກຽດ ທີ່ນັບຖື ແລະ ຮັກແພງ.**

ຂ້າພະເຈົ້າ ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຮັບອະນຸຍາດຈາກ ທ່ານປະທານກອງປະຊຸມ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຂຶ້ນປະກອບຄຳເຫັນຕໍ່ບົດລາຍງານ ຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ 4 ເດືອນຕົ້ນປີ ຄາດຄະເນ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2019 ຕໍ່ກອງສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໃນມື້ນີ້.

ຄະນະປະຈຳສະພາແຫ່ງຊາດ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ລັດຖະບານ ທີ່ໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດ ແຜນດັ່ງກ່າວຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງ ເຖິງວ່າ ສະພາບການຂອງໂລກ ແລະ ພາກພື້ນໄດ້ມີການຜັນແປຢ່າງສະລັບຊັບຊ້ອນ ແລະ ມີຜົນກະທົບບໍ່ໜ້ອຍຕໍ່ ສປປ ລາວ ລັດຖະບານກໍຍັງຮັກສາໄດ້ ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ການບໍລິຫານລັດຕາມກົດໝາຍ ໄດ້ຮັບການປັບປຸງ, ເສດຖະກິດໄດ້ຮັບການປັບປຸງໃນຈັງວະທີ່ຕັ້ງໜ້າ, ຊີວິດການເປັນຢູ່ຂອງ ປະຊາຊົນບັນດາເຜົ່ານັບມື້ນັບດີຂຶ້ນ.

**ຮຽນ: ທ່ານ ປະທານ ບັນດາທ່ານທີ່ນັບຖື ແລະ ຮັກແພງ**

ຜ່ານການຕິດຕາມກວດກາຕົວຈິງຂອງ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຕາມມະຕິ 099/ສພຊ ແລະ ມະຕິ 100/ສພຊ, ລົງວັນທີ 28/11/2018 ຄະນະປະຈຳສະພາແຫ່ງຊາດ ເຫັນວ່າມີບາງຄາດໝາຍຍັງມີຄວາມສ່ຽງທີ່ຈະບໍ່ສາມາດບັນລຸໄດ້ຕາມແຜນການ ດັ່ງນີ້:

## I. ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ:

**1.** ການຂະຫຍາຍຕົວຂອງເສດຖະກິດ ຍັງມີລັກສະນະບອບບາງ, ການຜະລິດ ແລະ ການລົງທຶນ ກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ບໍ່ໄປຕາມແຜນການ ຊຶ່ງສົ່ງຜົນກະທົບຕໍ່ລວມຍອດຜະລິດຕະພັນພາຍໃນ (GDP) ຈະບໍ່ໄດ້ຕາມແຜນ (ແຜນການ 6,7 %);

**2.** ການແຈ້ງແຜນງົບປະມານການລົງທຶນຂອງລັດ ຍັງຊັກຊ້າ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານອັນຮີບດ່ວນຂອງລັດຖະບານ ໃນງວດ 1 ບໍ່ສາມາດຈັດຕັ້ງປະຕິບັດຕາມແຜນທີ່ກໍານົດໄວ້;

**3.** ການປັບປຸງສະພາບແວດລ້ອມ ແລະ ການອໍານວຍຄວາມສະດວກໃນການດໍາເນີນທຸລະກິດ ຕາມຄໍາສັ່ງຂອງນາຍົກລັດ ຖະມົນຕີ ເລກທີ 02/ນຍ ຍັງເຮັດບໍ່ທັນໄດ້ຢ່າງຕັ້ງໜ້າ;

**4.** ການຊຸກຍູ້ສົ່ງເສີມການຜະລິດສິນຄ້າກະສິກໍາ, ການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ລວມທັງການຄຸ້ມຄອງໂຮງຈັກໂຮງງານຕ່າງໆ, ການຄຸ້ມຄອງສິນຄ້າ ແລະ ລາຄາ ຍັງບໍ່ທັນໄປຕາມ ມະຕິຂອງສະພາແຫ່ງຊາດຮັບຮອງ;

**5.** ການນໍາໃຊ້ທຶນເພື່ອການຄົ້ນຄວ້າວິທະຍາສາດ ຍັງບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ບໍ່ໄດ້ຮັບການຈັດຕັ້ງ ປະຕິບັດໃຫ້ເປັນຮູບປະທໍາ ຕາມມະຕິຂອງສະພາແຫ່ງຊາດ;

**6.** ການປະຕິບັດການຊົດເຊີຍ, ທົດແທນຄ່າເສຍຫາຍ ໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາຕ່າງໆ ທີ່ກໍ່ສ້າງສໍາເລັດແລ້ວ ແລະ ກໍາລັງກໍ່ສ້າງ ເປັນຕົ້ນ ໂຄງການກໍ່ສ້າງສະໜາມບິນຫຼວງພະບາງພາກຂະຫຍາຍ, ກໍ່ສ້າງເຂື່ອນໄຟຟ້າ, ກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ແລະ ອື່ນໆ ມາຮອດປັດຈຸບັນ ຍັງມີຄວາມຊັກຊ້າ;

**7.** ວຽກງານສຶກສາ ແລະ ກິລາ ຕາມ 9 ຄາດໝາຍ ທີ່ສະພາແຫ່ງຊາດຮັບຮອງ ເຫັນວ່າ ລັດຖະບານ ບໍ່ສາມາດຈັດຕັ້ງປະຕິບັດໄດ້ ຍິ່ງໄປກວ່ານັ້ນຍັງມີ 4 ຄາດໝາຍ ໃນ 15 ຄາດໝາຍລວມ ທີ່ເຄີຍປະຕິບັດໄດ້ຊ້ໍາພັດ ບໍ່ບັນລຸຕື່ມ ເປັນຕົ້ນ ອັດຕາການປະລະການຮຽນ, ອັດຕາຄ້າງຫ້ອງຂອງນັກຮຽນໃນທຸກຊັ້ນຮຽນ;

**8.** ວຽກງານສາທາລະນະສຸກ: ເຖິງວ່າມີຄວາມຄືບໜ້າຫຼາຍຄາດໝາຍກໍຕາມ ແຕ່ເຫັນວ່າ ຍັງມີຄວາມສ່ຽງ ໂດຍສະເພາະ ອັດຕາການເກີດລູກມີແພດຊ່ວຍ, ອັດຕາການຂາດສານອາຫານ ຂອງເດັກລຸ່ມ 5 ປີ, ອັດຕາການຊົມໃຊ້ວິດຖ່າຍ, ອັດຕາການຊົມໃຊ້ນ້ໍາສະອາດ ຊຶ່ງສາເຫດຕົ້ນຕໍ ຍ້ອນໄດ້ຮັບຜົນກະທົບຈາກໄພພິບັດໃນປີຜ່ານມາ, ງົບປະມານຍັງບໍ່ທັນພຽງພໍ, ປະຊາຊົນຈໍານວນໜຶ່ງ ຍັງມີຄວາມເຊື່ອຖື ງົມງວາຍ, ໂຄງລ່າງພື້ນຖານດ້ານຄົມມະນາຄົມ ບາງເຂດ ຍັງມີຄວາມຫຍຸ້ງຍາກ;

**9.** ວຽກງານແຮງງານ ແລະ ສະຫວັດດີການສັງຄົມ ໃນ 4 ເດືອນຜ່ານມາເຫັນວ່າ ບໍ່ທັນໄດ້ອະນຸມັດງົບປະມານເພື່ອປະຕິບັດນະໂຍບາຍ ຕໍ່ຜູ້ມີຜົນງານຄຸນງາມຄວາມດີ ຕໍ່ການປະຕິວັດຊາດປະຊາທິປະໄຕ ຕາມມະຕິວາງອອກ; ການປະຕິບັດລາຍຮັບ-ລາຍຈ່າຍຂອງກອງທຶນປະກັນສັງຄົມພາກລັດ ຍັງມີຄວາມຊັກຊ້າແກ່ຍາວ; ກົນໄກການນໍາໃຊ້ງົບປະມານຊ່ວຍເຫຼືອຂອງສາກົນ ຕໍ່ວຽກງານການເກັບກູ້ລະເບີດ ຍັງມີຫຼາຍຂັ້ນຕອນ, ບໍ່ຕອບສະໜອງທັນກັບເວລາ ແລະ ຄວາມຕ້ອງການຂອງວຽກງານ;

**10.** ວຽກງານຖະແຫຼງຂ່າວ, ວັດທະນະທໍາ ແລະ ການທ່ອງທ່ຽວ ການຫັນຈາກລະບົບອານາລ້ອກ ມາເປັນລະບົບດີຈີຕອນທີ່ທັນສະໄໝ, ການສ້າງຄອບຄົວວັດທະນະທໍາ ແລະ ບ້ານວັດທະນະທໍາ ການແກ້ໄຂສິ່ງອຸດຕັນໃນການອໍານວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ ອາດບໍ່ບັນລຸຕາມຄາດໝາຍທີ່ວາງອອກ ທຽບໃສ່ການປະຕິບັດຕົວຈິງໃນ 4 ເດືອນຜ່ານມາ;

**11.** ວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເຫັນວ່າ ຍັງບໍ່ທັນລວມສູນ ເຮັດພໍໃຜພໍລາວ, ການແບ່ງຄວາມຮັບຜິດຊອບ ແລະ ກົນໄກການປະສານງານຂອງບັນດາຂະແໜງການ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນລະອຽດຈະແຈ້ງ;

**12.** ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຫັນວ່າ ການກວດກາ ແລະ ຄຸ້ມຄອງຄົນ ເຂົ້າ-ອອກເມືອງ, ຄຸ້ມຄອງຄົນຕ່າງປະເທດ ແລະ ນັກທ່ອງທ່ຽວ ຍັງບໍ່ທັນມີການປະສານສົມທົບກັນດີເທົ່າທີ່ຄວນ ຍັງມີການລັກລອບ ປະກອບອາຊີບກະທໍາຜິດຕໍ່ລະບຽບກົດໝາຍ; ການແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ ກ່ຽວກັບ

ບັນຫາ ຢາເສບຕິດ, ຮ້ານເກມອອນລາຍ, ອຸປະຕິເຫດຕາມທ້ອງຖະໜົນ, ການຄ້າມະນຸດ, ການປຸ້ນຈີ້-ຊີງຊັບ ແລະ ການຄຸ້ມຄອງຄ້າຍຄຸມຂັງ-ດັດສ້າງ ຍັງເຮັດບໍ່ທັນເຂັ້ມງວດຕາມກົດໝາຍ.

## II. ດ້ານແຜນງົບປະມານແຫ່ງລັດ:

### 1. ດ້ານລາຍຮັບ:

ການຈັດຕັ້ງປະຕິບັດລາຍຮັບ 4 ເດືອນ ປະຕິບັດໄດ້ 24,03 % ຂອງແຜນການປີ ເຫັນວ່າ ມີທ່າອ່ຽງດີຂຶ້ນ ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ປົກກະຕິຄວນໄດ້ 32 %. ສາເຫດທີ່ພາໃຫ້ບໍ່ສາມາດປະຕິບັດໄດ້ຕາມແຜນ:

- ການຈັດເກັບລາຍຮັບຂອງທ້ອງຖິ່ນບໍ່ໄດ້ຕາມແຜນ ເນື່ອງຈາກວ່າຫຼາຍແຂວງ ໄດ້ຮັບມອບຕົວເລກຊ້າ ແລະ ສູງເກີນຖານຂໍ້ມູນການຈັດເກັບລາຍຮັບຕົວຈິງ;
- ການມອບພັນທະອາກອນແບບມອບເໝົາຍັງມີລັກສະນະຕໍ່ລອງ, ແຈ້ງເສຍພັນທະ ບໍ່ຖືກຕ້ອງຕາມກຳນົດເວລາ, ບໍ່ຖືກຕ້ອງຕາມລາຍຮັບຕົວຈິງ;
- ລະບົບການຈັດຕັ້ງການຈັດເກັບລາຍຮັບຢູ່ດ່ານສາກົນ ບໍ່ທັນເປັນເອກະພາບ, ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ນັກທ່ອງທ່ຽວ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ;
- ການຫັນເປັນທັນສະໄໝມີຫຼາຍແຂວງທີ່ຕິດຕັ້ງລະບົບທັນສະໄໝແລ້ວ ແຕ່ຍັງຂາດພະນັກງານວິຊາການທີ່ຮັບໃຊ້ວຽກງານດັ່ງກ່າວ ການຈັດເກັບລາຍຮັບທີ່ດີນຜ່ານລະບົບທະນາຄານ ຢູ່ຫຼາຍທ້ອງຖິ່ນ ຍັງບໍ່ພ້ອມໃນການປະຕິບັດຕົວຈິງ, ຫຼາຍຫົວໜ່ວຍທຸລະກິດຍັງບໍ່ທັນໄດ້ເຊື່ອມຕໍ່ຂໍ້ມູນກ່ຽວກັບການຂາຍສິນຄ້າ ແລະ ການບໍລິການຂອງຕົນເຂົ້າກັບລະບົບສ່ວຍສາອາກອນ;
- ການເກັບກູ້ຄືນລາຍຮັບຈາກຜົນການກວດກາຕາມຜົນການກວດສອບກໍຍັງບໍ່ສາມາດປະຕິບັດໄດ້ ເປັນຕົ້ນໜີ້ຕ້ອງຮັບຈາກຄ່າຊັບພະຍາກອນ, ຄ່າເຊົ່າ ແລະສຳປະທານທີ່ດິນ-ເຮືອນລັດ;
- ການເກັບກູ້ຊັບສິນ, ວັດຖຸເງິນຄຳທີ່ສານຕັດສິນໃຊ້ໄດ້ຢ່າງເດັດຂາດ ເພື່ອຮິບເປັນຂອງລັດ ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້;
- ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການຈັດເກັບລາຍຮັບ ຍັງບໍ່ທັນເຂັ້ມງວດ ຍັງມີການຕົກລົງອະນຸມັດຍົກເວັ້ນ ຫຼື ຫຼຸດຜ່ອນອັດຕາພາສີ-ອາກອນ ທີ່ບໍ່ສອດຄ່ອງກັບກົດໝາຍ.

### 2. ດ້ານລາຍຈ່າຍ:

- ລາຍຈ່າຍ 4 ເດືອນ ປະຕິບັດໄດ້ 19,97% ຂອງແຜນການປີ ເຫັນວ່າຕ່ຳກວ່າແຜນທີ່ສະພາແຫ່ງຊາດອະນຸມັດ;
- ລາຍຈ່າຍລົງທຶນໄດ້ ອະນຸມັດເອກະສານກວດຜ່ານຂອງກະຊວງແຜນການ ແລະ ການລົງທຶນ ທັງໝົດ 2.455 ໂຄງການ ມູນຄ່າ 1.627,62 ຕື້ກີບ ເທົ່າກັບ 37,3% ຂອງແຜນການປີ ມາເຖິງປັດຈຸບັນ ກະຊວງການເງິນໄດ້ຊຳລະຕົວຈິງ ທັງໝົດ 262,80 ຕື້ກີບ ເທົ່າກັບ 13,17% ເຫັນວ່າຕ່ຳກວ່າ ຕົວເລກຄາດໝາຍແຜນການ ທີ່ວາງໄວ້, ຍ້ອນວ່າການແຈ້ງຕົວເລກ ມີຄວາມຊັກຊ້າ, ປີຜ່ານມາມີຜົນກະທົບຈາກໄພພິບັດທາງທຳມະຊາດ ຕ້ອງໄດ້ລໍຖ້າການປະເມີນຜົນໂຄງການຟື້ນຟູໄພພິບັດ ເຮັດໃຫ້ຂອດຂັ້ນການອະນຸມັດ ແລະ ການແຈ້ງຕົວເລກລົງທຶນຂອງລັດ ແກ່ບັນດາແຂວງ ຊັກຊ້າ.

**3. ການດຸ່ນດ່ຽງ:** ການຊອກຫາແຫຼ່ງທຶນດອກເບ້ຍຕ່ຳ ເພື່ອມາດຸ່ນດ່ຽງງົບປະມານ ແລະ ສະໜອງທຶນໃຫ້ແກ່ການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງຍັງບໍ່ສາມາດບັນລຸໄດ້ຕາມແຜນການ.

### 4. ການຈັດແບ່ງງົບປະມານຕົວຈິງຂອງກະຊວງການສາຍຕັ້ງ:

ການຈັດຕັ້ງປະຕິບັດການໂຮມກອງທຶນປະກັນສັງຄົມ ແລະ ກອງທຶນປະກັນສຸຂະພາບ ຍັງມີຄວາມຫຍຸ້ງຍາກ, ການຄຸ້ມຄອງ ແລະ ນຳໃຊ້ເງິນຄ່າບໍລິການຢູ່ສະຖານທີ່ກວດພະຍາດ ແລະ ປິ່ນປົວຂອງລັດ ເປັນຕົ້ນ ການເບີກຖອນລາຍຮັບ ຈາກຄ່າບໍລິການວິຊາການ ເພື່ອໄປຈັດຊື້ຢາ ແລະ ເຄື່ອງຮັບໃຊ້ການແພດ ກໍຍັງພົບຄວາມຫຍຸ້ງຍາກ.

**5. ການສັງລວມໜີ້ສິນສາທາລະນະ ແລະການຄຸ້ມຄອງການຊໍາລະໜີ້ສິນ:**

- ໜີ້ສິນຄ້າງຊໍາລະໂຄງການລົງທຶນຂອງລັດ ໂດຍສະເພາະໂຄງການທີ່ສໍາເລັດ 100% ຍັງມີລັກສະນະຄຸມເຄືອ;
- ໜີ້ສິນທີ່ເກີດຈາກ ການກູ້ຢືມໂດຍກົງ ແລະ ການຄໍ້າປະກັນ ຂອງລັດຖະບານ ໃຫ້ແກ່ລັດວິສາຫະກິດ ແລະ ພາກເອກະຊົນ ຍັງມີຈໍານວນບໍ່ໜ້ອຍ ແລະ ມີຄວາມສ່ຽງໃນການຊໍາລະຄືນຕາມສັນຍາ.

**ຮຽນທ່ານປະທານ ແລະ ບັນດາທ່ານ ທີ່ນັບຖື ແລະ ຮັກແພງ**

ຕໍ່ກັບທິດທາງໃນການສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ໃນ 6 ເດືອນ ທ້າຍປີ 2019 ທີ່ລັດຖະບານ ໄດ້ສະເໜີມານັ້ນ, ຄະນະປະຈໍາສະພາແຫ່ງຊາດ ເຫັນດີໂດຍພື້ນຖານ; ແຕ່ໂອກາດນີ້ ສະເໜີບາງບັນຫາເພີ່ມເຕີມ ດັ່ງນີ້:

**1.** ສືບຕໍ່ຈັດຕັ້ງປະຕິບັດ ມະຕິ 099/ສພຊ ແລະ ມະຕິ 100/ສພຊ ລົງວັນທີ 28 ພະຈິກ 2018 ໃຫ້ເຂັ້ມງວດ ແລະບັນລຸຕາມຄາດໝາຍທີ່ວາງໄວ້;

**2.** ກ່ຽວກັບແຜນງົບປະມານແຫ່ງລັດ ສະເໜີມາດຕະການເພີ່ມເຕີມດັ່ງນີ້:

**2.1 ດ້ານລາຍຮັບ:**

- ຊຸກຍູ້ຫົວໜ່ວຍວິສາຫະກິດ ຖືບັນຊີ, ວິສາຫະກິດທີ່ມີລາຍຮັບ 400 ລ້ານກີບ ຂຶ້ນໄປ ຕ້ອງເຂົ້າສູ່ລະບົບອາກອນມູນຄ່າເພີ່ມ;
- ເລັ່ງທວງໜີ້ຕ້ອງຮັບຈາກວິສາຫະກິດທີ່ໄດ້ຜ່ານການໄລ່ລຽງ ແລະມີແຈ້ງການໃຫ້ມອບພັນທະແລ້ວ, ສືບຕໍ່ເກັບອາກອນກໍາໄລຈາກຜູ້ຮັບເໝົາໂຄງການກໍ່ສ້າງສາຍສົ່ງ-ສະຖານີ ແລະ ເຂື່ອນໄຟຟ້າ ຕາມມະຕິຂອງຄະນະປະຈໍາສະພາແຫ່ງຊາດສະບັບເລກທີ 04/ ຄປຈ, ລົງວັນທີ 15/01/2019;
- ຊີ້ນໍາກະຊວງການເງິນ ປະສານສົມທົບກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຂຶ້ນບັນຊີ, ຄຸ້ມຄອງ ແລະ ເກັບກູ້ ຊັບສິນ, ວັດຖຸເງິນຄໍາ ທີ່ສານຕັດສິນໃຊ້ໄດ້ຢ່າງເດັດຂາດ ເພື່ອຮິບເປັນຂອງລັດ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງຊັບສິນຂອງລັດ;
- ສືບຕໍ່ເກັບກູ້ຄືນລາຍຮັບຈາກຜົນການກວດກາຕາມຜົນການກວດສອບ ນັບແຕ່ ສົກປີ 2013-2014 ເປັນຕົ້ນມາ.

**2.2 ດ້ານລາຍຈ່າຍ:**

ເອົາໃຈໃສ່ຊໍາລະໂຄງການລົງທຶນບູລິມະສິດຂອງລັດຖະບານ ເປັນຕົ້ນ ໂຄງການໄພພິບັດສຸກເສີນ, ໂຄງການຍຸດທະສາດຊາຍແດນ, ໂຄງການແກ້ໄຂຄວາມທຸກຍາກ.

**2.3 ການສັງລວມໜີ້ສິນສາທາລະນະ ແລະການຄຸ້ມຄອງການຊໍາລະໜີ້ສິນ:**

ສືບຕໍ່ເລັ່ງທວງໜີ້ສິນຂອງບັນດາວິສາຫະກິດ ທີ່ຜ່ານການກວດກາໄລ່ລຽງແລ້ວ, ໜີ້ຄ້າງມອບຕາມສັນຍາເຊົ່າ, ສໍາປະທານ, ເງິນຄໍ້າປະກັນນໍາບັນດາໂຄງການຕ່າງໆ ທີ່ຍັງເກັບບໍ່ໄດ້ຕາມທີ່ອົງການກວດສອບ ກວດກາເຫັນໃນສົກປີຜ່ານມາ.

**3.** ສືບຕໍ່ປັບປຸງວິສາຫະກິດຂອງລັດຈໍານວນໜຶ່ງທີ່ຍັງຂາດສະພາບຄ່ອງທາງດ້ານການເງິນໃຫ້ສໍາເລັດໂດຍໄວ ແລະ ສາມາດເຄື່ອນໄຫວໄດ້ດີຂຶ້ນ;

**4.** ປັບປຸງກົນໄກການປະສານງານລະຫວ່າງ ຂະແໜງການຕ່າງໆ ໃຫ້ມີຄວາມຄ່ອງຕົວຂຶ້ນກວ່າເກົ່າໃນຂົງເຂດການລົງທຶນ ແລະ ວຽກງານທີ່ດິນ;

**5.** ອອກນິຕິກໍາ ຈໍານວນໜຶ່ງທີ່ເຫັນວ່າຈໍາເປັນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ມະຕິ099/ສພຊ ແລະ ມະຕິ 100/ສພຊ ລົງວັນທີ 28 ພະຈິກ 2018 ໃຫ້ມີຜົນສໍາເລັດ ເປັນຕົ້ນ: ການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ຕິດພັນກັບການຈັດເກັບລາຍຮັບ;

**6.** ໃນຂົງເຂດວັດທະນະທໍາ-ສັງຄົມ ໃຫ້ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ມີຄວາມສ່ຽງ, ເອົາໃຈໃສ່ສ້າງກົນໄກ ແລະ ນິຕິກໍາ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດບັນດາຄາດໝາຍໃຫ້ສໍາເລັດບັນລຸໃນທ້າຍປີ; ປັບປຸງແກ້ໄຂບາງນິຕິກໍາທີ່ຍັງບໍ່ສອດຄ່ອງ ໂດຍສະເພາະ ມາດຕາ 61 ຂອງກົດໝາຍວ່າດ້ວຍ

ການສຶກສາ ຢ່າງເຂັ້ມງວດ, ຄົ້ນຄວ້າສ້າງກົນໄກການນຳໃຊ້ງົບປະມານ ບ້ວງຊ່ວຍເຫຼືອສາກົນ ຕໍ່ວຽກງານໄພພິບັດ ແລະເກັບກູ້ລະເບີດບໍ່ທັນແຕກໃຫ້ຄ່ອງຕົວ ແລະທ່ວງທັນຕາມເວລາ; ເອົາໃຈໃສ່ ປະເມີນຄືນ ແລະ ຕິດຕາມກວດກາ ການສ້າງຄອບຄົວວັດທະນະທຳ ແລະບ້ານວັດທະນະທຳ ໃຫ້ໄດ້ມາດຕະຖານທີ່ໄດ້ກຳນົດໄວ້.

ທັງໝົດນັ້ນ ແມ່ນບາງຄຳເຫັນຂອງ ຄະນະປະຈຳສະພາແຫ່ງຊາດ ຊຶ່ງສັງລວມໄດ້ຈາກການຕິດ ຕາມກວດກາຂອງ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃນນາມເປັນຕົວແທນຂອງປະຊາຊົນໃນຂອບເຂດທົ່ວປະເທດ ປະຕິບັດໜ້າທີ່ຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ທີ່ທ່ານນາຍົກລັດຖະມົນຕີ ໄດ້ລາຍງານຕໍ່ ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VIII.

ທ້າຍສຸດນີ້ ຂໍອວຍພອນທ່ານ ປະທານປະເທດແຫ່ງ ສປປ ລາວ, ທ່ານ ປະທານສະພາແຫ່ງຊາດ, ທ່ານນາຍົກລັດຖະມົນຕີ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ບັນດາທ່ານສະມາຊິກລັດຖະບານ, ແຂກຜູ້ມີກຽດທຸກທ່ານ ຈົ່ງມີສຸກຂະພາບແຂງແຮງ ແລະ ປະສົບຜົນສຳເລັດ ໃນໜ້າທີ່ອັນມີກຽດຂອງທ່ານ.

ອວຍພອນໃຫ້ກອງປະຊຸມປະສົບຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ.

**( ຂໍຂອບໃຈ)**

ປັບປຸງ ວັນທີ 05 ມິຖຸນາ 2019

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ຄຳຖາມເຈາະຈີ້ມ**
**ຂອງ ທ່ານປະທານກອງປະຊຸມ ຕໍ່ບົດລາຍງານຂອງລັດຖະບານ**
**ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ 4 ເດືອນ ຄາດຄະເນ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2019 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7**
**ຂອງສະພາແຫ່ງຊາດ ຊຸດທີ VIII**

**ຮຽນ: ທ່ານ ນາຍົກລັດຖະມົນຕີ,**
- **ບັນດາທ່ານສະມາຊິກສະພາແຫ່ງຊາດ,**
- **ບັນດາສະມາຊິກລັດຖະບານ,**
- **ບັນດາແຂກທີ່ມີກຽດທີ່ນັບຖື ແລະ ຮັກແພງ.**

ໂດຍປະຕິບັດຕາມວາລະການດຳເນີນກອງປະຊຸມ, ຕໍ່ໄປກອງປະຊຸມຈະໄດ້ປະກອບຄຳເຫັນໃສ່ບົດລາຍງານຂອງລັດຖະບານ ຊຶ່ງສະເໜີໂດຍ ທ່ານ ນາຍົກລັດຖະມົນຕີ, ທ່ານ ທອງລຸນ ສີສຸລິດ ກ່ຽວກັບສະພາບພົ້ນເດັ່ນໃນການເຄື່ອນໄຫວວຽກງານ ໃນໄລຍະ 4 ເດືອນຜ່ານມາ, ຄາດຄະເນການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງວຽກງານຈຸດສຸມ 6 ເດືອນທ້າຍປີ 2019 ກໍຄືບົດປະກອບຄຳເຫັນຂອງ ຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານດັ່ງກ່າວ.

ສະນັ້ນ, ເພື່ອເປັນບ່ອນອີງໃຫ້ແກ່ການປະກອບຄຳເຫັນຂອງ ສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານດັ່ງກ່າວ, ຂ້າພະເຈົ້າຂໍສະເໜີບາງຄຳເຫັນເຈາະຈີ້ມ ດັ່ງນີ້:

**1.** ສະເໜີໃຫ້ສະມາຊິກສະພາແຫ່ງຊາດ ມີຄຳເຫັນຕໍ່ບົດລາຍງານ ຂອງທ່ານ ນາຍົກລັດຖະມົນຕີ, ທ່ານ ຮອງນາຍົກລັດຖະມົນຕີ ແລະ ການປະກອບຄຳເຫັນຂອງ ຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານດັ່ງກ່າວ. ໃນນັ້ນ:

- ຕໍ່ກັບ ການຕີລາຄາ ຜົນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ໃນໄລຍະ 4 ເດືອນຜ່ານມາ ເຫັນວ່າ ມີຄວາມຖືກຕ້ອງ ແລະ ເໝາະສົມແລ້ວບໍ່?

- ໃຫ້ບັນດາທ່ານລົງເລິກ ຊອກຫາສາເຫດ ທີ່ບໍ່ສາມາດບັນລຸແຜນການ ທີ່ຄາດຄະເນໄວ້ ສຳລັບ 6 ເດືອນຕົ້ນປີ 2019 ໂດຍສະເພາະ ການຈັດເກັບລາຍຮັບເຂົ້າງົບປະມານ ຂອງທ້ອງຖິ່ນ, ກົນໄກການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ.

**2.** ສະເໜີໃຫ້ບັນດາທ່ານ ມີຄຳເຫັນ ກ່ຽວກັບ ການຈັດຕັ້ງປະຕິບັດ ວຽກງານ ການຜະລິດເປັນສິນຄ້າ, ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ (ໂດຍສະເພາະ 2 ເມືອງເປົ້າໝາຍ ຄື ເມືອງນອງ ແລະ ເມືອງກວັນ), ວຽກງານການສຶກສາ, ວຽກງານສາທາລະນະສຸກ ໃນໄລຍະຜ່ານມາ ຂອງລັດຖະບານ ທຽບໃສ່ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 099/ສພຊ ທີ່ໄດ້ຮັບຮອງໄປນັ້ນ ທ່ານເຫັນວ່າ ຍັງມີອັນໃດທີ່ລັດຖະບານຍັງບໍ່ທັນສາມາດຈັດຕັ້ງປະຕິບັດໄດ້ ແລະ ລັດຖະບານຄວນປັບປຸງຂອດໃດ, ບັນຫາໃດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ບັນລຸຕາມຄາດໝາຍທີ່ວາງໄວ້.

**3.** ສະເໜີໃຫ້ສະມາຊິກສະພາແຫ່ງຊາດ ມີຄຳເຫັນກ່ຽວກັບທິດທາງວຽກງານຈຸດສຸມ 6 ເດືອນທ້າຍປີ 2019 ຕາມການສະເໜີຂອງລັດຖະບານ ຕໍ່ກອງປະຊຸມໃນຄັ້ງນີ້ ໂດຍສະເພາະ:

- ຕໍ່ກັບ ບັນດານະໂຍບາຍ, ມາດຕະການ ທີ່ລັດຖະບານສະເໜີມານັ້ນ ເຫັນວ່າ ເໝາະສົມແລ້ວບໍ່? ທ່ານ ສະມາຊິກສະພາແຫ່ງຊາດ ເຫັນຄວນໃຫ້ມີການເພີ່ມມາດຕະການໃດຕື່ມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍທີ່ກອງປະຊຸມສະພາແຫ່ງຊາດ ໄດ້ຮັບຮອງໄປນັ້ນໃຫ້ສາມາດບັນລຸໄດ້ຕາມແຜນການ.
- ສະເໜີໃຫ້ສະມາຊິກສະພາແຫ່ງຊາດ ລົງເລິກ ກ່ຽວກັບ ນະໂຍບາຍ ແລະ ມາດຕະການ ການຈັດເກັບລາຍຮັບເຂົ້າງົບປະມານ ສຳລັບ 6 ເດືອນທ້າຍປີ 2019 ຍັງມີມາດຕະການໃດ ຫຼື ກົນໄກໃດ ເພີ່ມເຕີມ ສະເໜີແນະໃຫ້ລັດຖະບານ ເອົາໄປຄົ້ນຄວ້າຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ປາກົດຜົນເປັນຈິງ

**ບັນດາທ່ານທີ່ນັບຖື ແລະ ຮັກແພງ**

ໂດຍປະຕິບັດຕາມລະບຽບການ ແລະ ວາລະກອງປະຊຸມ, ສະເໜີໃຫ້ບັນດາທ່ານ ສະມາຊິກສະພາແຫ່ງຊາດ ປະກອບຄຳເຫັນ ທ່ານໜຶ່ງສູງສຸດບໍ່ເກີນ 8 ນາທີ. ສະນັ້ນ, ບັນດາທ່ານຜູ້ແທນ ຄວນຕັດຈ້ອນເນື້ອໃນບົດຄຳເຫັນຂອງຕົນໃຫ້ກະທັດຮັດ, ມີຈຸດສຸມ ແລະ ສະເໜີ ວິທີການແກ້ໄຂບັນຫາຕ່າງໆ ຕໍ່ລັດຖະບານ ເພື່ອນຳໄປພິຈາລະນາ, ປັບປຸງ ແລະ ມີມາດຕະການແກ້ໄຂ ໃນ 6 ເດືອນທ້າຍປີ 2019 ໃຫ້ບັນລຸຄາດໝາຍຕາມທີ່ວາງໄວ້.

ຕໍ່ໄປຂໍເຊີນບັນດາທ່ານສະມາຊິກສະພາແຫ່ງຊາດ ປະກອບຄຳເຫັນ.